ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

# ຄູ່ມືສຳລັບ
# ການຂຶ້ນທະບຽນອາຫານສັດ

ເມສາ 2022

# ຄູ່ມືສຳລັບການຂຶ້ນທະບຽນອາຫານສັດ



ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້
ຈັດພິມ 2022

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1594/ກປ

ນະຄອນຫຼວງວຽງຈັນ, ວັນທີ 06 MAR 2023

# ຂໍ້ຕົກລົງ
## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ຄູ່ມືການຂຶ້ນທະບຽນອາຫານສັດ

- ອີງຕາມ ກົດໝາຍ ວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍອາຫານສັດ ສະບັບເລກທີ 02/ລບ, ລົງວັນທີ 02 ມັງກອນ 2020;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືລາຍງານຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 0376/ກລປ, ລົງວັນທີ15 ກຸມພາ 2023.

ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

**ມາດຕາ 1** ຮັບຮອງ ແລະ ປະກາດໃຊ້ " **ຄູ່ມືການຂຶ້ນທະບຽນອາຫານສັດ** " ເພື່ອຄຸ້ມຄອງວຽກງານຄວາມປອດໄພຂອງອາຫານສັດ ຢູ່ ສປປ ລາວ.

**ມາດຕາ 2** ມອບໃຫ້ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ **ຄູ່ມືການຂຶ້ນທະບຽນອາຫານສັດ** ໃຫ້ໄດ້ຮັບຜົນດີ.

**ມາດຕາ 3** ຫ້ອງການ, ບັນດາກົມ, ສະຖາບັນອ້ອມຂ້າງກະຊວງ, ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ **ຄູ່ມືການຂຶ້ນທະບຽນອາຫານສັດ.**

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮມ. ລັດຖະມົນຕີ

ທອງພັດ ວົງມະນີ

# ຄຳນຳ

ອາຫານສັດມີຄວາມສຳຄັນ ແລະ ຈຳເປັນຫຼາຍ ຕໍ່ກັບການມີຊີວິດ ແລະ ຈະເລີນເຕີບໂຕຂອງສັດ ຊຶ່ງ ເປັນສ່ວນເສີມສ້າງ ເນື້ອເຍື່ອໃນ, ໜັງ, ໂຄງກະດູກ, ກ້າມຊີ້ນ ແລະ ອະໄວຍະວະພາຍໃນຕ່າງໆ ຂອງຮ່າງກາຍສັດ; ຕໍ່ກັບການດຳລົງຊີວິດ ອາຫານສັດ ໃຫ້ພະລັງງານ ຊ່ວຍໃຫ້ສັດສາມາດ ຫາຍໃຈ, ຍ່ອຍອາຫານ, ຂັບຖ່າຍ ແລະ ແລະ ເຄື່ອນໄຫວໄປມາ; ຕໍ່ກັບການສືບພັນ ອາຫານສັດຊ່ວຍເຮັດ ໃຫ້ຂະບວນການສືບພັນຂອງສັດເພດຜູ້ ແລະ ເພດແມ່ ສາມາດພັດທະນາ ແລະ ທຳງານຢ່າງເປັນປົກກະຕິເຮັດໃຫ້ສັດມີລູກຫຼານສືບໜໍ່ແທນແນວ; ນອກຈາກນັ້ນ ອາຫານສັດຍັງຊ່ວຍເຮັດໃຫ້ສັດໃຫ້ຜົນຜະລິດ ເປັນຕົ້ນ ໃຫ້ຊີ້ນ, ນົມ, ໄຂ່, ຂົນ, ເຂົາ ແລະ ຜະລິດຕະພັນສຳຮອງຕ່າງໆອີກດ້ວຍ.

ດັ່ງທີ່ພວກ ເຮົາຮູ້ ນຳກັນແລ້ວວ່າ ແຫຼ່ງອາຫານສັດ ແມ່ນໄດ້ມາຈາກ ທຳມະຊາດ ແລະ ໄດ້ຈາກຄົນເຮົາປຸງແຕ່ງຂຶ້ນ , ຊຶ່ງມາໃນປະຈຸບັນນີ້ ບົດບາດຂອງແຫຼ່ງອາຫານສັດຈາກທຳມະຊາດແມ່ນມີຫຼຸດໜ້ອຍຖອຍລົງ ແຕ່ແຫຼ່ງອາຫານສັດທີ່ຜະລິດຈາກຄົນເຮົາແມ່ນມີນັບມື້ນັບເພີ່ມຂຶ້ນ ແລະ ມີບົດບາດຢ່າງສູງທັງທາງດ້ານການ ຍົກຜະລິດຕະພາບ ແລະ ເຮັດໃຫ້ເກີດ ເປັນສິນຄ້າ ນັບມື້ ນັບເພີ່ມຂຶ້ນ.

ຢ່າງໃດກໍຕາມ ເພື່ອເຮັດໃຫ້ອາຫານສັດ ທີ່ຄົນເຮົາຜະລິດ ແລະ ປຸງແຕ່ງຂຶ້ນ ມີຄຸນນະພາບ , ປອດໄພ ແລະ ເໝາະສົມສຳລັບ ແຕ່ລະປະເພດ, ຊ່ວງອາຍຸ ຂອງສັດ ແລະ ບໍ່ໃຫ້ເປັນອັນຕະລາຍຕໍ່ຜູ້ບໍລິໂພກນັ້ນ ອີງການຄຸ້ມຄອງທີ່ກ່ຽວ ຂ້ອງຂອງ ປະເທດຕ່າງໆ ຈຶ່ງໄດ້ມີມາດຕະການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຢູ່ໃນທຸກຕ່ອງໂສ້ນັບແຕ່ຂັ້ນຕອນ ການຜະລິດ ຈົນເຖິງຂັ້ນຕອນຈຳໜ່າຍ ແລະ ນຳໃຊ້ອາຫານສັດ.

ນອກຈາກຂະບວນການຄວບຄຸມຄຸນນະພາບ ດັ່ງທີ່ກ່າວມາຂ້າງເທິງນັ້ນແລ້ວ ກ່ອນການຜະລິດ ອາຫານສັດຕ້ອງໄດ້ ມີການຂໍອະນຸຍາດສ້າງຕັ້ງທຸລະກິດ, ທົດລອງຜະລິດ ແລະ ທີ່ສຳຄັນ ກ່ອນຈຳໜ່າຍຕ້ອງໄດ້ເອົາຜະລິດຕະພັນໄປຂໍຂຶ້ນທະບຽນເສັຍກ່ອນ ຜະລິດຕະພັນອາຫານສັດກໍຕ້ອງໄດ້ເອົາອາຫານສັດນັ້ນມາຂຶ້ນທະບຽນເຊັ່ນດຽວກັນ.

ທີ່ນະຄອນຫຼວງວຽງຈັນວັນທີ....30 MAY 2022....

**ຫົວໜ້າກົມລ້ຽງສັດ ແລະ ການປະມົງ**

ກະຊວງກະສິກຳແລະປ່າໄມ້ ກົມລ້ຽງສັດແລະການປະມົງ

**ນ. ວິໄລພອນ ວໍລະພົມ**

# ສາລະບານ


| | | ໜ້າ |
|---|---|---|
| | ຄຳນຳ | 1 |
| 1. | ຄວາມໝາຍຂອງອາຫານສັດ: | 2 |
| 2. | ການອະທິບາຍຄຳສັບ. | 2 |
| 3. | ຂອບເຂດການນຳໃຊ້ | 2 |
| 4. | ເງື່ອນໄຂຂອງອາຫານສັດທີ່ຂໍຂຶ້ນທະບຽນອາຫານສັດ | 2 |
| 5. | ເງື່ອນໄຂຂອງຜູ້ຖືຄອງໃບທະບຽນອາຫານສັດ | 3 |
| 6. | ອາຫານສັດ ແລະ ວັດຖຸດິບອາຫານສັດ ທີ່ຕ້ອງໄດ້ຂຶ້ນທະບຽນອາຫານສັດ | 3 |
| 7. | ຂໍ້ມູນທີ່ຕ້ອງການສຳລັບການຂຶ້ນທະບຽນອາຫານສັດ | 6 |
| 8. | ຂັ້ນຕອນການຂຶ້ນທະບຽນອາຫານສັດ | 6 |
| 9. | ຂັ້ນຕອນຂໍປັບປຸງ ຫຼື ຂໍໃບຂຶ້ນທະບຽນຄືນໃໝ່ | 7 |
| 10. | ກຳນົດເວລາໃນການຂຶ້ນທະບຽນອາຫານສັດ | 7 |
| 11. | ນ້ຳເບີທະບຽນອາຫານສັດ | 8 |
| 12. | ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການຂຶ້ນທະບຽນອາຫານສັດ | 9 |
| 13. | ແບບພິມໃບທະບຽນອາຫານສັດ | 9 |
| 14. | ຄຳແນະນຳສຳລັບຜູ້ໄດ້ຮັບໃບຂຶ້ນທະບຽນອາຫານສັດ | 9 |
| 15. | ການໂຈະ ໃບທະບຽນອາຫານສັດ | 10 |
| 16. | ການຖອນໃບທະບຽນອາຫານສັດ | 10 |

ເອກະສານຊ້ອນທ້າຍ 1.

1. ໃບຄຳຮ້ອງຂໍຂຶ້ນທະບຽນອາຫານສັດ.

ເອກະສານຊ້ອນທ້າຍ 2.

1. ໃບຄຳຮ້ອງຂໍອະນຸຍາດອອກແບບເປົາບັນຈຸອາຫານສັດ.

ເອກະສານຊ້ອນທ້າຍ 3.

1. ໃບຄຳຮ້ອງຂໍຂຶ້ນທະບຽນວັດຖຸດິບອາຫານສັດ.

ເອກະສານຊ້ອນທ້າຍ 4.

1. ໃບຄຳຮ້ອງຂໍຂຶ້ນທະບຽນອາຫານສັດ ຊະນິດປະສົມລ່ວງໜ້າ ແລະ ປະເພດອາຫານເສີມ.

ເອກະສານຊ້ອນທ້າຍ 5.

ຊື່, ຊະນິດ ແລະ ປະລິມານການໃຊ້ວັດຖຸດິບທີ່ເພີ່ມ ໃນອາຫານສັດ.

ເອກະສານຊ້ອນທ້າຍ 6.

1. ໃບແຈ້ງຊະນິດວັດຖຸດິບອາຫານສັດ.

ເອກະສານຊ້ອນທ້າຍ 7.

ຂໍ້ຄວາມທີ່ຕ້ອງລະບຸໄວ້ເທິງສະຫຼາກ ຊະນິດອາຫານປະສົມສຳເລັດຮູບ ຫຼື ຫົວອາຫານສັດ

ເອກະສານຊ້ອນທ້າຍ 8.

1. ໃບແຈ້ງຊະນິດອາຫານສັດ.

ເອກະສານຊ້ອນທ້າຍ 9.

1. ບົດລາຍງານການທົດລອງການນຳໃຊ້ສູດອາຫານສັດ

ເອກະສານຊ້ອນທ້າຍ 10.

ຕາຕະລາງໃຊ້ເພື່ອກວດກາລາຍການ ການປະກອບເອກະສານ (Check list)

ເອກະສານຊ້ອນທ້າຍ 11.

ໃບທະບຽນສູດອາຫານສັດ

1. **ຈຸດປະສົງ**

ຄູ່ມືສະບັບນີ້ ສ້າງຂຶ້ນ ແມ່ນເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 08/ ສພຊ ລົງວັນທີ 11 ພະຈິກ 2016 ແລະ ດຳລັດ ວ່າດ້ວຍອາຫານສັດ ເລກທີ 02/ລບ ລົງວັນທີ 2 ມັງກອນ 2020 ໃຫ້ເປັນຄຳແນະນຳ ສຳລັບການຂຶ້ນທະບຽນອາຫານສັດ ແນໃສ່ ຄຸ້ມຄອງອາຫານສັດທີ່ນຳໃຊ້ຢູ່ສປປ ລາວ ໃຫ້ມີຄຸນນະພາບ, ປອດໄພ ແລະ ເໝາະສົມສຳລັບການນຳໃຊ້.

2. **ຄວາມໝາຍຂອງອາຫານສັດ:**

ອາຫານສັດ ໝາຍເຖິງ ວັດຖຸທີ່ສັດກິນໄດ້ ຊຶ່ງປະກອບດ້ວຍ ວັດຖຸທີ່ຖືກປຸງແຕ່ງເປັນແບບສຳເລັດຮູບ, ເຄິ່ງສຳເລັດຮູບ ຫຼື ບໍ່ທັນໄດ້ປຸງແຕ່ງ ທີ່ສາມາດໃຊ້ເຂົ້າໃນການລ້ຽງສັດ ເພື່ອໃຫ້ໄດ້ຜົນຜະລິດຕາມທີ່ຕ້ອງການ. ອາຫານສັດຢູ່ໃນຄູ່ມືສະບັບນີ້ ລວມເອົາອາຫານປາ ແລະ ສັດນ້ຳອື່ນ.

3. **ການອະທິບາຍຄຳສັບ.**

1) **ການຂຶ້ນທະບຽນອາຫານສັດ** ໝາຍເຖິງ ການຮວບຮວມຂໍ້ມູນ, ຕົວຢ່າງ: ສະຫຼາກ ແລະ ລາຍການສູດຕຳລາອາຫານສັດ ທີ່ມີລາຍລະອຽດ ຂອງສ່ວນປະສົມຫຼັກ ໃນອາຫານສັດ ຂອງກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກຳ ແລະ ປ່າໄມ້;
2) **ອາຫານສັດສຳເລັດຮູບ** ໝາຍເຖິງ ອາຫານສັດ ທີ່ໄດ້ຜ່ານຂະບວນການປຸງແຕ່ງສຳເລັດຮູບຢ່າງສົມບູນຈາກໂຮງງານແລ້ວພ້ອມທີ່ຈະນຳໃຊ້ລ້ຽງສັດໄດ້ໂດຍກົງ;
3) **ອາຫານສັດເຂັ້ມຂຸ້ນສຳເລັດຮູບ** ໝາຍເຖິງ ອາຫານສັດທີ່ໄດ້ຜ່ານຂະບວນການປຸງແຕ່ງໃດໜຶ່ງ ຈາກໂຮງງານຊຶ່ງປະກອບດ້ວຍ ໂປຣຕີນ ແລະ ແຮ່ທາດສູງ ໂດຍກ່ອນການນຳໃຊ້ຕ້ອງໄດ້ປະສົມກັບວັດຖຸດິບອາຫານສັດ ໃດໜຶ່ງຕາມສູດທີ່ກຳນົດໄວ້ໃນສະຫຼາກອາຫານສັດແລ້ວຈຶ່ງ ນຳໃຊ້ລ້ຽງສັດໄດ້;
4) **ສານເພີ່ມໃສ່ອາຫານສັດ** ໝາຍເຖິງ ສານໃດໜຶ່ງທີ່ເພີ່ມໃສ່ອາຫານສັດ ເພື່ອເຮັດໃຫ້ ຜະລິດຕະພັນອາຫານສັດ ມີຮູບຮ່າງ, ກິ່ນ, ສີ ແລະ ອື່ນໆ ແນໃສ່ໃຫ້ອາຫານສັດ ເໝາະສົມກັບຄວາມຕ້ອງການຂອງສັດ ໃນແຕ່ລະໄລຍະ. ສານເພີ່ມໃສ່ອາຫານ ບໍ່ລວມເອົາ ສານທີ່ເປັນຢາ ທີ່ປະສົມໃສ່ອາຫານສັດ ເພື່ອປ້ອງກັນ ຫຼື ປິ່ນປົວສັດ;
5) **ອາຫານເສີມ** ໝາຍເຖິງ ອາຫານສັດທີ່ໃຫ້ເພີ່ມເຕີມນອກເໜືອຈາກອາຫານຫຼັກທີ່ມີຈຸດປະສົງເພື່ອເຮັດໃຫ້ສັດຈະເລີນເຕີບໂຕ, ມີສຸຂະພາບແຂງແຮງ, ໃຫ້ຜົນຜະລິດ ແລະ ເພີ່ມປະສິດທິພາບໃນການຂະຫຍາຍພັນດີ;
6) **ອາຫານສັດປະສົມຢາ** (Medicated feed) ໝາຍເຖິງ ອາຫານສຳເລັດຮູບ, ອາຫານເຂັ້ມຂຸ້ນ ຫຼື ອາຫານເສີມທີ່ມີການປະສົມຢາສັດຕະວະແພດ ເພີ່ມໃສ່ ທີ່ໄດ້ຮັບການອະນຸຍາດ ຈາກອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໂດຍມີຈຸດປະສົງນຳໃຊ້ລ້ຽງສັດເພື່ອປ້ອງກັນ ຫຼື ປິ່ນປົວພະຍາດສັດໃດໜຶ່ງ;
7) **ພາຊະນະບັນຈຸ** ໝາຍເຖິງ ວັດຖຸໃດໜຶ່ງທີ່ໃຊ້ບັນຈຸຫຸ້ມຫໍ່ອາຫານສັດໂດຍສະເພາະ;
8) **ສະຫຼາກ** ໝາຍເຖິງ ຮູບ, ຮອຍປະດິດ ຫຼື ຂໍ້ຄວາມຕ່າງໆທີ່ສະແດງໄວ້ໃນພາຊະນະບັນຈຸອາຫານສັດ.

4. **ຂອບເຂດການນຳໃຊ້**

ປຶ້ມຄູ່ມືນີ້ ໃຊ້ສຳລັບ ພະນັກງານ ຂອງອົງການຄຸ້ມຄອງວຽກງານ ລ້ຽງສັດ, ສັດຕະວະແພດ ແລະ ປະມົງ ແລະ ສຳລັບ ຜູ້ດຳເນີນທຸລະກິດກ່ຽວກັບອາຫານສັດ.

**5. ເງື່ອນໄຂຂອງອາຫານສັດທີ່ຈະຂໍຂຶ້ນທະບຽນ**

ເງື່ອນໄຂຂອງອາຫານສັດທີ່ຈະມາຂໍຂຶ້ນທະບຽນ ມີ ດັ່ງນີ້:

1) ອາຫານສັດທີ່ຜະລິດ, ນໍາເຂົ້າ, ສົ່ງອອກ ຫຼື ຈໍາໜ່າຍຢູ່ ສປປ ລາວ;

2) ເປັນອາຫານທີ່ມີການທົດລອງນໍາໃຊ້, ວິໄຈດ້ານຄຸນະພາບ ແລະ ຄວາມປອດໄພແລ້ວ;

3) ອາຫານສັດນໍາເຂົ້າທີ່ໄດ້ ຂຶ້ນທະບຽນຢູ່ປະເທດສົ່ງອອກແລ້ວ ແລະ ໄດ້ຮັບການມອບສິດ ຈາກຜູ້ຜະລິດ ຂອງປະເທດສົ່ງອອກ;

4) ອາຫານສັດທີ່ມີເອກະສານ ແລະ ຕົວຢ່າງ ອາຫານສັດ ຕາມການກໍານົດຂອງກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກໍາ ແລະ ປ່າໄມ້.

**6. ເງື່ອນໄຂຂອງຜູ້ຖືຄອງໃບທະບຽນອາຫານສັດ**

ຜູ້ຖືຄອງໃບທະບຽນອາຫານສັດຕ້ອງມີເງື່ອນໄຂ ດັ່ງນີ້:

1) ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ອານຸຍາດດໍາເນີນການຜະລິດ, ນໍາເຂົ້າ, ສົ່ງອອກ ສົ່ງຜ່ານອາຫານສັດ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

2) ຖ້າຜູ້ຖືຄອງໃບທະບຽນ ບໍ່ແມ່ນເຈົ້າຂອງອາຫານສັດ ທີ່ມາຂໍຂຶ້ນທະບຽນຕ້ອງ ມີໃບມອບສິດຢ່າງເປັນລາຍລັກອັກສອນຈາກເຈົ້າຂອງ ແລະ ຕ້ອງເປັນຜູ້ຮັບຜິດຊອບທຸກຢ່າງທີ່ກ່ຽວຂ້ອງກັບການມາຂໍຂຶ້ນທະບຽນອາຫານສັດ;

3) ມີທີ່ຢູ່ຖາວອນ ແລະ ບໍ່ມີປະຫວັດກະທໍາຜິດລະບຽບກົດໝາຍທີ່ກ່ຽວຂ້ອງ;

4) ປະຕິບັດລະບຽບການທີ່ວາງອອກ ແລະ ໃຫ້ຄວາມຮ່ວມມືກັບອົງການຄຸ້ມຄອງທີ່ກ່ຽວຂ້ອງ.

**7. ອາຫານສັດ ແລະ ວັດຖຸດິບ ທີ່ຕ້ອງໄດ້ຂໍ ຂຶ້ນທະບຽນອາຫານສັດ**

ອາຫານສັດ ແລະ ວັດຖຸດິບທີ່ຕ້ອງໄດ້ຂໍ ຂຶ້ນທະບຽນອາຫານສັດ ມີດັ່ງນີ້:

1) ອາຫານສັດສໍາເລັດຮູບ;

2) ອາຫານສັດ ເຂັ້ມຂຸ້ນ ສໍາເລັດຮູບ;

3) ສານເພີ່ມໃສ່ອາຫານສັດ ສໍາເລັດຮູບ;

4) ອາຫານເສີມສໍາເລັດຮູບ;

5) ອາຫານສັດປະສົມຢາ;

6) ວັດຖຸດິບປຸງແຕ່ງອາຫານສັດ.

- ອາຫານສັດສໍາເລັດຮູບໄດ້ແກ່:

1) ອາຫານສັດສໍາເລັດຮູບສໍາລັບງົວ-ຄວາຍ;

2) ອາຫານສັດສໍາເລັດຮູບສໍາລັບ ໝູ;

3) ອາຫານສັດສໍາເລັດຮູບສໍາລັບ ແກະ, ແບ້;

4) ອາຫານສັດສໍາເລັດຮູບສໍາລັບ ໄກ່;

5) ອາຫານສັດສຳເລັດຮູບສຳລັບ ເປັດ, ຫ່ານ;

6) ອາຫານສັດສຳເລັດຮູບສຳລັບ ນົກກະທາ;

7) ອາຫານສັດສຳເລັດຮູບສຳລັບ ປາ-ສັດນ້ຳ;

8) ອາຫານສັດສຳເລັດຮູບສຳລັບ ໝາ, ແມວ;

9) ອາຫານສັດສຳເລັດຮູບສຳລັບ ກະຕ່າຍ;

10)ອາຫານສັດສຳເລັດຮູບສຳລັບ ມ້າ;

11)ອາຫານສັດສຳເລັດຮູບສຳລັບນົກ.

- ອາຫານສັດເຂັ້ມຂຸ້ນ ສຳເລັດຮູບ ສຳລັບປະສົມເປັນອາຫານຂອງສັດຈຳພວກ:

1) ສຳລັບງົວ-ຄວາຍ;

2) ສຳລັບ ໝູ;

3) ສຳລັບ ແກະ, ແບ້;

4) ສຳລັບ ໄກ່;

5) ສຳລັບ ເປັດ, ຫ່ານ;

6) ສຳລັບ ນົກກະທາ;

7) ສຳລັບ ປາ-ສັດນ້ຳ;

8) ສຳລັບ ໝາ, ແມວ;

9) ສຳລັບ ກະຕ່າຍ;

10)ສຳລັບ ມ້າ;

11)ສຳລັບນົກ.

- ສານເພີ່ມໃສ່ອາຫານສັດສຳເລັດຮູບ ໄດ້ແກ່:

1) ສານແຕ່ງກິ່ນ;
2) ສານແຕ່ງສີ;
3) ສານແຕ່ງລົດ;
4) ສານຖະໜອມ;
5) ສ້າງຮູບແບບ ແລະ ລັກສະນະຂອງອາຫານສັດ.

- ອາຫານເສີມສຳເລັດຮູບ ສຳລັບສັດ ແລະ ອາຫານສັດປະສົມຢາ ໄດ້ແກ່:

1) ອາຫານເສີມໂປຣຕີນ;

2) ອາຫານເສີມແຮ່ທາດ;

3) ອາຫານເສີມວິຕາມິນ;

4) ອາຫານເສີມໄຂມັນ;

5) ອາຫານປະສົມສຳເລັດຮູບປະສົມຢາ;

6) ອາຫານສັດເຂັ້ມຂຸ້ນປະສົມຢາ;

7) ອາຫານເສີມສຳເລັດຮູບປະສົມຢາ.

– ວັດຖຸດິບປຸງແຕ່ງອາຫານສັດ ໄດ້ແກ່:

1) ກາກຖົ່ວເຫຼືອງໂປຣຕີນບໍ່ເກີນ 42 %;

2) ກາກຖົ່ວເຫຼືອງໂປຣຕີນເກີນ 42 %;

3) ກາກຖົ່ວດິນ;

4) ປາປົ່ນໂປຣຕີນບໍ່ເກີນ 50 %;

5) ປາປົ່ນໂປຣຕີນ 51-55 %;

6) ປາປົ່ນໂປຣຕີນເກີນກ່ວາ 55 %;

7) ຮຳອ່ອນ (ສະເພາະນຳເຂົ້າ );

8) ຮຳແກ່ (ສະເພາະນຳເຂົ້າ );

9) ຮຳສະກັດນ້ຳມັນ;

10) ກາກແກ່ນໝາກປາມ;

11) ກາກໝາກປາມລວມ;

12) ສາລີເມັດ ຄຸນນະພາບລະດັບ 1;

13) ສາລີເມັດ ຄຸນນະພາບລະດັບ 2;

14) ສາລີບົດ ຄຸນນະພາບລະດັບ 1;

15) ສາລີບົດຄຸນນະພາບລະດັບ 2;

16) ປາ ແລະ ກະດູກປາປົ່ນ;

17) ຖົ່ວເຫຼືອງອົບ;

18) ຂົນສັດປີກ ບົດ;

19) ຊີ້ນປົ່ນໂປຣຕີນບໍ່ເກີນ 62 %;

20) ຊີ້ນປົ່ນໂປຣຕີນເກີນກ່ວາ 63-69 %;

21) ຊີ້ນປົ່ນໂປຣຕີນເກີນກ່ວາ 70 %;

22) ຊີ້ນສັດສະກັດໄຂມັນ;

23) ຊີ້ນ ແລະ ກະດູກປົ່ນ (ໂປຣຕີນ 50%);

24) ຊີ້ນ ແລະ  ກະດູກປົ່ນ (ໂປຣຕີນ 45%);

25) ຊີ້ນສັດປີກ ປົ່ນ;

26) ສິ່ງເສດເຫຼືອຈາກຜະລິດຕະພັນສັດປີກ;

27) ກາກເຣປຊີດ ຫຼື ກາກຄາໂນລາ;

28) ກາກແກ່ນດອກຕາເວັນ;

29) ກາກດີດີຈີເອັສ DDGS (ກາກເມັດພືດ ທີ່ຜ່ານຂະບວນການຜະລິດເຫຼົ້າ ແລະ ເຮັດໃຫ້ແຫ້ງແລ້ວ);

30) ໂປຣຕີນຈາກສາລີ ຫຼື ເມັດພືດອື່ນໆ;

31) ເລືອດປົ່ນ;

32) ກາກແກ່ນຝ້າຍ;

33) ນ້ຳມັນປາມ;

34) ກາກນ້ຳຕານ;

35) ນົມຜົງສຳລັບລ້ຽງສັດ (Whole Milk Powder Feed Grade);

36) ນົມຜົງສະກັດໄຂມັນສຳລັບລ້ຽງສັດ (Skimmed Milk Powder Feed Grade);

37) ນົມຜົງສະກັດໄຂມັນບາງສ່ວນ ສຳລັບລ້ຽງສັດ (Partly Skimmed Milk Powder Feed Grade);

38) ນົມຜົງສະກັດໄຂມັນດັດແປງ ສຳລັບລ້ຽງສັດ (Denatured Skimmed Milk Powder);

39) ຜົງສິ່ງເສດເຫຼືອຈາກຜະລິດຕະພັນນົມ (Whey Powder);

40) ອາຫານແທນນົມ (Milk Replacer);

41) ຜົງສິ່ງເສດເຫຼືອຈາກ ການດັດແປງຜະລິດຕະພັນນົມ (Denatured Whey Powder);

42)ຜົງສິ່ງເສດເຫຼືອຈາກຜະລິດຕະພັນນົມສຳເລັດຮູບ (Processed Whey Powder).

**8. ເອກະສານປະກອບການຂໍການຂຶ້ນທະບຽນອາຫານສັດ**

ເອກະສານປະກອບການຂໍການຂຶ້ນທະບຽນອາຫານສັດ ມີດັ່ງນີ້:

1) ຄຳຮ້ອງ ຕາມແບບພິມທີ່ກົມລ້ຽງສັດ ແລະ ການປະມົງກຳນົດ;

2) ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດອາຫານສັດ;

3) ສຳເນົາບັດປະຈຳຕົວ ຫຼື ໜັງສືເດີນທາງ;

4) ໃບມອບສິດຈາກຜູ້ຜະລິດອາຫານສັດ ແລະ ໃບຂຶ້ນທະບຽນອາຫານສັດ ຈາກປະເທດສົ່ງອອກ;

5) ໃບມອບສິດ ແລະ ບັດປະຈຳຕົວຂອງຜູ້ຕາງໜ້າໃນກໍລະນີຜູ້ອື່ນມາຂໍຂຶ້ນທະບຽນແທນ;

6) ສະຫຼາກອາຫານສັດ;

7) ບົດລາຍງານການທົດລອງການນຳໃຊ້ສູດອາຫານສັດ ທີ່ມາຂໍຂຶ້ນທະບຽນ;

8) ໃບແຈ້ງຊະນິດ ແລະ ລາຍການສູດອາຫານສັດ ທີ່ມີລາຍລະອຽດ ຂອງສ່ວນປະກອບຫຼັກອາຫານສັດ;

9) ຄູ່ມືຂັ້ນຕອນການຜະລິດອາຫານສັດ;

10) ເອກະສານອື່ນ ທີ່ເຫັນວ່າມີຄວາມຈຳເປັນ ຕາມການຮຽກຮ້ອງຂອງກົມລ້ຽງສັດ ແລະ ການປະມົງ.

## 9. ຂັ້ນຕອນການຂໍ ແລະ ພິຈາລະນາການຂຶ້ນທະບຽນອາຫານສັດ

ສຳລັບຜູ້ທີ່ມີຈຸດປະສົງຂໍຂຶ້ນທະບຽນອາຫານສັດ:

1) ພົວພັນເອົາແບບພິມຄຳຮ້ອງຂໍຂຶ້ນທະບຽນອາຫານສັດ ຈາກກົມລ້ຽງສັດ ແລະ ການປະມົງ ຫຼື ດາວໂຫຼດເອົາຈາກເວບໄຊ ຂອງ ກົມລ້ຽງສັດ ແລະ ການປະມົງ (https://dlf.maf.gov.la )
2) ພິມຂໍ້ມູນລົງແບບພິມຄຳຮ້ອງ, ກຽມຕົວຢ່າງ ແລະ ປະກອບເອກະສານຕ່າງໆ ຕາມທີ່ກຳນົດໄວ້ໃນຂໍ້ 8 ຂອງຄູ່ມືສະບັບນີ້;
3) ຍື່ນຄຳຮ້ອງ ຢູ່ພະແນກບໍລິຫານ ແລະ ແຜນການ, ກົມລ້ຽງສັດ ແລະ ການປະມົງ ກະຊວງ ກະສິກຳ ແລະ ປ່າໄມ້ ຊຶ່ງຕັ້ງຢູ່ ບ້ານ ສີຖານເໜືອ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ເບີໂທລະສັບ 021 215 141, 021 215 242 ອີເມລ:.............

**ສຳລັບພະນັກງານຂອງອົງການຄຸ້ມຄອງທີ່ກ່ຽວຂ້ອງ:**

1) ພະແນກບໍລິຫານ ແລະ ແຜນການ ໄດ້ຮັບເອກະສານແລ້ວໃຫ້ກວດເອກະສານ, ບັນທຶກ ແລະ ສົ່ງເອກະສານໄປຍັງສູນວິໄຈອາຫານສັດ;
2) ສູນວິໄຈອາຫານສັດດຳເນີນການກວດກາ ຄົ້ນຄ້ວາໃນລາຍລະອຽດຂອງ ເອກະສານ;
3) ໃນກໍລະນີຜົນການຄົ້ນຄວ້າເອກະສານ ບໍ່ຜ່ານໃຫ້ ສູນວິໄຈອາຫານສັດແຈ້ງໃຫ້ຜູ້ມາຂໍຂຶ້ນທະບຽນນຳໄປປັບປຸງໃຫ້ຄົບຖ້ວນ ແລະ ຖືກຕ້ອງ;
4) ໃນກໍລະນີການຄົ້ນຄວ້າເອກະສານຜ່ານ ໃຫ້ສູນວິໄຈອາຫານສັດ ຕິດຕໍ່ຫາຜູ້ຂໍຂຶ້ນທະບຽນອາຫານສັດ ນຳເອົາຕົວຢ່າງອາຫານສັດຢ່າງໜ້ອຍ 500 ກຣາມ ມາວິໄຈ ແລະ ຈ່າຍວິໄຈ;
5) ສູນວິໄຈອາຫານສັດດຳເນີນການວິໄຈ, ຖ້າຫາກຜົນການວິໄຈບໍ່ຜ່ານໃຫ້ແນະນຳໃຫ້ຜູ້ປະກອບການໄປປັບປຸງສູດອາຫານສັດ ຫຼື ວັດຖຸດິບອາຫານ ຄືນໃໝ່;
6) ຖ້າຜົນການວິໄຈ ຜ່ານ ໃຫ້ສູນວິໄຈອາຫານສັດ ເຮັດ ໃບສະເໜີ ແລະ ຄັດຕິດດ້ວຍ ບົດສະຫຼຸບຜົນການຄົ້ນຄວ້າ, ສຳນວນເອກະສານ ແລະ ຜົນການວິໄຈ ໄປໃຫ້ພະແນກມາດຕະຖານ ແລະ ສຸຂານາໄມ;
7) ພະແນກມາດຕະຖານ ແລະ ສຸຂານາໄມ ກວດກາຄວາມຖືກຕ້ອງ, ຫາກພົບສິ່ງທີ່ບໍ່ຖືກຕ້ອງໃຫ້ປະສານສົມທົບກັບສູນວິໄຈອາຫານສັດ ແລະ ຜູ້ຂໍຂຶ້ນທະບຽນປັບປຸງ;
8) ຖ້າຫາກພົບວ່າ ທຸກຢ່າງຖືກຕ້ອງໃຫ້ຮ່າງໃບທະບຽນອາຫານສັດ ແລ້ວສົ່ງໃຫ້ພະແນກບໍລິຫານ ແລະ ແຜນການ ເພື່ອໃຫ້ຫົວໜ້າກົມລົງລາຍເຊັນ;
9) ພະແນກບໍລິຫານ ແລະ ແຜນການ ແຈ້ງໃຫ້ຜູ້ປະກອບການມາຈ່າຍຄ່າທຳນຽມ ແລະ ມອບໃບທະບຽນໃຫ້ຜູ້ປະກອບການ.

ການຂຶ້ນທະບຽນອາຫານສັດ ແມ່ນໃຫ້ສຳເລັດພາຍໃນກຳນົດ 120 ວັນ ພາຍຫຼັງທີ່ໄດ້ຮັບຄຳຮ້ອງ. ອາຍຸການນຳໃຊ້ໃບທະບຽນອາຫານສັດແມ່ນມີກຳນົດ 3 ປີ. ກ່ອນໝົດອາຍຸການນຳໃຊ້ 90 ວັນ ຜູ້ຖືຄອງທະບຽນອາຫານສັດຕ້ອງໄດ້ຍື່ນຄຳຮ້ອງ ເພື່ອຂໍຕໍ່ທະບຽນ ຢູ່ກົມລ້ຽງສັດ ແລະ ການປະມົງ, ຖ້າບໍ່ປະຕິບັດພາຍໃນກຳນົດເວລາດັ່ງກ່າວນັ້ນ ໃບທະບຽນອາຫານສັດແມ່ນບໍ່ສາມາດນຳໃຊ້ໄດ້.

ໃນກໍລະນີ ຜູ້ຖືຄອງໃບທະບຽນອາຫານສັດເຮັດໃບທະບຽນອາຫານສັດເສັຍຫາຍ ຫຼື ຕ້ອງການປັບປຸງ ສູດອາຫານສັດ ຫຼື ເນື້ອໃນຂອງໃບທະບຽນອາຫານສັດ ຕ້ອງໄດ້ຍື່ນຄຳຮ້ອງຂໍໃບທະບຽນອາຫານສັດຊົ່ວຄາວ ຫຼື ໃບທະບຽນອາຫານສັດສະບັບປັບປຸງ ຢູ່ພະແນກບໍລິຫານ ແລະ ແຜນການ, ກົມລ້ຽງສັດ ແລະ ການປະມົງ. ເມື່ອໄດ້ຮັບຄຳຮ້ອງຂອງຜູ້ຂໍ ແລ້ວ ໃຫ້ພະແນກບໍລິຫານ ແລະ ແຜນການສົ່ງເອກະສານໄປຍັງພະແນກມາດຕະຖານ ແລະ ສຸຂານາໄມ ເພື່ອຄົ້ນຄວ້າຄວາມຖືກຕ້ອງ, ຮ່າງໃບທະບຽນຊົ່ວຄາວ ແລະ ດຳເນີນການຕາມລະບຽບການ.

## 10. ຂັ້ນຕອນການຂໍຕໍ່ອາຍຸການນຳໃຊ້, ຂໍໃບທະບຽນອາຫານສັດຊົ່ວຄາວ ແລະ ຂໍປັບປຸງໃບທະບຽນອາຫານສັດ

ຂັ້ນຕອນການຂໍຕໍ່ອາຍຸການນຳໃຊ້ໃບທະບຽນອາຫານສັດ, ຂໍໃບທະບຽນອາຫານສັດຊົ່ວຄາວ ແລະ ຂໍປັບປຸງໃບທະບຽນອາຫານສັດ. ສຳລັບຜູ້ຮ້ອງຂໍ ແລະ ສຳລັບພະນັກງານຂອງອົງການຄຸ້ມຄອງທີ່ກ່ຽວຂ້ອງ ແມ່ນໃຫ້ປະຕິບັດ ຕາມຂໍ້ກຳນົດຂອງຂໍ້ 9 ຂອງຂໍ້ຕົກລົງສະບັບນີ້ ແຕ່ ຜູ້ມາຂໍຕໍ່ອາຍຸໃບທະບຽນອາຫານສັດ ຕ້ອງສຳເນົາໃບຂຶ້ນທະບຽນອາຫານສັດທີ່ຈະໝົດອາຍຸ, ໃບທະບຽນອາຫານສັດທີ່ເສຍຫາຍ ຫຼື ໃບທະບຽນອາຫານສັດທີ່ຕ້ອງການປັບປຸງ ແນບມານຳ.

## 11. ນຳເປີທະບຽນອາຫານສັດ

ສັນຍາລັກ ແລະ ລະຫັດທະບຽນອາຫານສັດ ປະກອບດ້ວຍ: ສັນຍາລັກ ຂຽນເປັນ ອັກສອນ 3 ໂຕ ນຳໜ້າ ຄື: **ອຫສ** ແລະ ຕາມດ້ວຍຕົວເລກ 12 ໂຕ ໂດຍມີລັກສະນະ ດັ່ງນີ້:

**ອຫສ** X-X-XX-XXXX-XXXX (**ອຫສ** 1-1-01-0121-0001)

ອຫສ = ອາຫານສັດ

ເລກ 1 ໂຕ ທຳອິດ: 1 = ພາຍໃນ, 2 = ຕ່າງປະເທດ

ເລກ 1 ໂຕ ຖັດໄປ ແມ່ນ ປະເພດອາຫານສັດ:
- 1 = ອາຫານສັດ ແລະ ສັດນ້ຳ ສຳເລັດຮູບ;
- 2 = ອາຫານສັດ ແລະ ສັດນ້ຳເຂັ້ມຂຸ້ນ ສຳເລັດຮູບ;
- 3 = ສານເພີ່ມໃສ່ອາຫານສັດ ແລະ ສັດນ້ຳ ສຳເລັດຮູບ;
- 4 = ອາຫານເສີມສຳເລັດຮູບ ສຳລັບສັດ ແລະ ສັດນ້ຳ; ອາຫານສັດປະສົມຢາ.
- 5 = ວັດຖຸດິບເພື່ອການປຸງແຕ່ງອາຫານສັດ;

ເລກ 2 ໂຕ ຖັດໄປ ແມ່ນ ລະຫັດແຂວງ:
- 01 = ນະຄອນຫຼວງວຽງຈັນ;
- 02 = ຜົ້ງສາລີ;
- 03 = ຫຼວງນ້ຳທາ;
- 04 = ອຸດົມໄຊ;
- 05 = ບໍ່ແກ້ວ;
- 06 = ຫຼວງພະບາງ;

07 = ຫົວພັນ;

08 = ໄຊຍະບູລີ;

09 = ຊຽງຂວາງ;

10 = ວຽງຈັນ;

11 = ບໍລິຄໍາໄຊ;

12 = ຄໍາມ່ວນ;

13 = ສະຫວັນນະເຂດ;

14 = ສາລະວັນ;

15 = ເຊກອງ;

16 = ຈໍາປາສັກ;

17 = ອັດຕະປື;

18 = ໄຊສົມບູນ.

ເລກ 4 ໂຕ ຖັດໄປ ແມ່ນ ເດືອນ ແລະ ປີ ທີ່ຂຶ້ນທະບຽນ

ເລກ 4 ໂຕ ສຸດທ້າຍ ແມ່ນເລກລໍາດັບຂອງອາຫານສັດທີ່ໄດ້ຂຶ້ນທະບຽນ

## 12. ຄ່າທໍານຽມ ແລະ ຄ່າບໍລິການ ສໍາລັບການຂຶ້ນທະບຽນອາຫານສັດ

ຜູ້ຂໍຂຶ້ນທະບຽນອາຫານສັດຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ຕາມທີ່ໄດ້ກໍານົດໄວ້ໃນລັດຖະບັນຍັດ, ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ແລະ ຈ່າຍຄ່າວິໄຈອື່ນ ທີ່ ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດ.

## 13. ແບບພິມໃບທະບຽນອາຫານສັດ, ໃບທະບຽນອາຫານສັດຊົ່ວຄາວ ແລະ ໃບທະບຽນອາຫານສັດສະບັບປັບປຸງ

ໃບຂຶ້ນທະບຽນອາຫານສັດ, ໃບທະບຽນອາຫານສັດຊົ່ວຄາວ ແລະ ໃບທະບຽນອາຫານສັດສະບັບປັບປຸງ ໃຫ້ນໍາໃຊ້ແບບພິມທີ່ເປັນເອກະພາບ ຕາມເອກະສານຊ້ອນທ້າຍ.

## 14. ຄໍາແນະນໍາສໍາລັບຜູ້ໄດ້ຮັບໃບຂຶ້ນທະບຽນອາຫານສັດ

ຜູ້ໄດ້ຮັບໃບຂຶ້ນທະບຽນອາຫານສັດ ມີສິດ ແລະ ພັນທະໃນການນໍາໃຊ້ໃບທະບຽນອາຫານສັດ ດັ່ງນີ້:

1) ນໍາໃຊ້ໃບຂຶ້ນທະບຽນອາຫານສັດ ເພື່ອປົກປ້ອງລິຂະສິດສູດອາຫານສັດຂອງຕົນ;

2) ໂຄສະນາອາຫານສັດທີ່ໄດ້ຂຶ້ນທະບຽນແລ້ວ;

3) ໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ;

4) ພິມເລກທະບຽນອາຫານສັດໃສ່ສິ່ງບັນຈຸອາຫານສັດ ແລະ ສະຫຼາກຂອງອາຫານສັດ;

5) ເສຍຄ່າທຳນຽມ, ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ;

6) ຫ້າມຜູ້ໄດ້ຮັບໃບຂຶ້ນທະບຽນອາຫານສັດ ມີພຶດຕິກຳ ດັ່ງນີ້:

(1). ດຳເນີນການຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍອາຫານສັດທີ່ບໍ່ໄດ້ຂຶ້ນທະບຽນ ຫຼື ຖືກຖອນໃບທະບຽນ;

(2). ໂອນ ຫຼື ໃຫ້ເຊົ່າໃບຂຶ້ນທະບຽນອາຫານສັດ;

(3). ຜະລິດອາຫານສັດທີ່ບໍ່ກົງກັບສູດອາຫານສັດທີ່ຂຶ້ນທະບຽນໄວ້;

(4). ໂຄສະນາອາຫານສັດ ເກີນຄວາມຈິງ ຫຼື ບໍ່ຖືກຕ້ອງຕາມຄຸນນະພາບທີ່ໄດ້ຂຶ້ນທະບຽນໄວ້;

(5). ແບ່ງບັນຈຸອາຫານປອມໃສ່ຖົງອາຫານສັດທີ່ໄດ້ຂຶ້ນທະບຽນແລ້ວ;

(6). ມີພຶດຕິກຳອື່ນທີ່ລະເມີດກົດໝາຍ.

7) ມີຄວາມຮັບຜິດຊອບເພີ່ມເຕີມ ດັ່ງນີ້:

(1) ປະຕິບັດການຂໍຂຶ້ນທະບຽນອາຫານສັດ ຂອງອົງການ ແລະ ເຈົ້າໜ້າທີ່ອອກທະບຽນ ຕາມຂັ້ນຕອນທີ່ກຳນົດ;

(2) ລາຍງານທຸກຂໍ້ມູນ ທີ່ກ່ຽວກັບຄຸນນະພາບ ແລະ ຄວາມປອດໄພ ຂອງອາຫານສັດ ຢ່າງຖືກຕ້ອງ;

(3) ແຈ້ງຕໍ່ອົງການຄຸ້ມຄອງ ທັນທີ ເມື່ອມີການປ່ຽນແປງ ຂໍ້ມູນຕິດຕໍ່ຂອງຜູ້ຖືຄອງໃບທະບຽນອາຫານສັດ ລວມເອົາທັງຊື່, ທີ່ຢູ່ ຂອງຜູ້ຕິດຕໍ່, ເບີໂທລະສັບ, ໂທລະສານ ແລະ ທີ່ຢູ່ທາງອີແມລ;

(4) ແຈ້ງຕໍ່ອົງການຄຸ້ມຄອງ ທັນທີ ເມື່ອມີການຢຸດຕິການຖືຄອງໃບທະບຽນອາຫານສັດ.

**15. ການໂຈະ ໃບທະບຽນອາຫານສັດ**

ໃບທະບຽນອາຫານສັດຈະຖືກໂຈະ ໃນກໍລະນີ ດັ່ງນີ້:

1) ອາຫານສັດ ທີ່ໄດ້ຂຶ້ນທະບຽນແລ້ວ ແຕ່ບໍ່ມີການເຄື່ອນໄຫວຜະລິດ, ນຳເຂົ້າ ຫຼື ຈຳໜ່າຍ ພາຍໃນກຳນົດ 3 ປີ;

2) ກວດພົບ ແລະ ຢັ້ງຢືນວ່າມີຜົນກະທົບຕໍ່ສຸຂະພາບຂອງ ຄົນ ຫຼື ສັດ.

**16. ການຖອນໃບທະບຽນອາຫານສັດ**

ໃບທະບຽນອາຫານສັດ ຈະຖືກຖອນ ໃນກໍລະນີ ດັ່ງນີ້:

1) ບໍ່ປະຕິບັດຕາມການແຈ້ງເຕືອນ ຂອງອົງການຄຸ້ມຄອງວຽກງານອາຫານສັດ.

2) ໃບທະບຽນຢູ່ປະເທດ ຜູ້ຜະລິດຖືກຍົກເລີກ.

ພະແນກມາດຕະຖານ ແລະ ສຸຂານາໄມ, ກົມລ້ຽງສັດ ແລະ ການປະມົງ ຕ້ອງລຶບຂໍ້ມູນອາຫານສັດ ອອກຈາກບັນຊີອາຫານສັດ ແລະ ແຈ້ງການຢ່າງເປັນລາຍລັກອັກສອນໃຫ້ສາທາລະນະຮັບຊາບ.

## 17. ຂັ້ນຕອນການຂໍອະນຸມັດຮູບແບບ ແລະ ນໍາໃຊ້ເປົ້າບັນຈຸອາຫານສັດ

ຜູ້ທີ່ມີທະບຽນອາຫານສັດແລ້ວ ກ່ອນການຈໍາໜ່າຍ ຕ້ອງໄດ້ ຂໍອະນຸມັດຮູບແບບ ແລະ ນໍາໃຊ້ ເປົ້າບັນຈຸອາຫານສັດເສຍກ່ອນ ໂດຍໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1) ພິວພັນເອົາແບບພິມຄໍາຮ້ອງຂໍອະນຸມັດຮູບແບບເປົ້າບັນຈຸອາຫານສັດ: ຈາກສູນວິໄຈອາຫານສັດ, ກົມລ້ຽງສັດ ແລະ ການປະມົງ ຫຼື ດາວໂຫຼດເອົາຈາກເວບໄຊ ຂອງ ກົມລ້ຽງສັດ ແລະ ການປະມົງ; (https://dlf.maf.gov.la )
2) ຕື່ມຂໍ້ມູນລົງແບບພິມຄໍາຮ້ອງພ້ອມດ້ວຍເອກະສານອອກແບບເປົ້າບັນຈຸອາຫານສັດ ທີ່ຕ້ອງປະກອບດ້ວຍຂໍ້ມູນກ່ຽວກັບ ຊື່ອາຫານ, ຍີ່ຫໍ້, ຂະໜາດບັນຈຸ, ຮູບແບບ, ສ່ວນປະກອບຫຼັກ, ວິທີການເກັບຮັກສາ, ວິທີການນໍາໃຊ້, ວັນທີຜະລິດ, ໝົດອາຍຸ ແລະ ເລກທະບຽນ;
3) ຍື່ນຄໍາຮ້ອງ ແລະ ເອກະສານ ຢູ່ພະແນກບໍລິຫານ ແລະ ແຜນການ, ກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກໍາ ແລະ ປ່າໄມ້ ຊຶ່ງຕັ້ງຢູ່ ບ້ານ ສີຖານເໜືອ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ເບີໂທລະສັບ 021 215 141, 021 215 242 ອີເມລ:;
4) ເມື່ອພະແນກບໍລິຫານ ແລະ ແຜນການ ໄດ້ຮັບເອກະສານແລ້ວ ໃຫ້ບັນທຶກ ແລະ ສົ່ງເອກະສານໄປຍັງ ສູນວິໄຈອາຫານສັດ;
5) ສູນວິໄຈອາຫານສັດດໍາເນີນການຄົ້ນຄ້ວາເອກະສານ;
6) ໃນກໍລະນີຜົນການຄົ້ນຄວ້າເອກະສານ ບໍ່ຜ່ານ ສູນວິໄຈອາຫານສັດ ແຈ້ງໃຫ້ຜູ້ມາຂໍອະນັດຮູບແບບເປົ້າບັນຈຸອາຫານສັດ ນໍາໄປປັບປຸງໃຫ້ຖືກຕ້ອງ;
7) ໃນກໍລະນີການຄົ້ນຄວ້າເອກະສານຜ່ານ ໃຫ້ສູນວິໄຈອາຫານສັດ ຮ່າງໃບອະນຸມັດຮູບແບບເປົ້າບັນຈຸອາຫານສັດ ແລະ ສົ່ງໃຫ້ຫົວໜ້າກົມລ້ຽງສັດ ແລະ ການປະມົງ ລົງລາຍເຊັນ;
8) ຜູ້ຂໍອະນຸມັດຈ່າຍຄ່າທໍານຽມ ແລະ ຮັບໃບອະນຸມັດ.

## ເອກະສານຊ້ອນທ້າຍ 1.

แบบฟอมທີ 1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຊື່ບໍລິສັດ: .............................. ເລກທີ............./...........

ທີ່.................. ວັນທີ....../......./.........

ທີ່ຢູ່:....................................

ເບີໂທລະສັບ:...........................

ອີແມລ:……………………….

## ໃບຄໍາຮ້ອງຂໍຂຶ້ນທະບຽນອາຫານສັດ

### 1. ຂໍ້ມູນສ່ວນຕົວ

1.1 ຊື່ ແລະ ນາມສະກຸນ.............................................................. ອາຍຸ.......ປີ, ສັນຊາດ.............
ບັດປະຈໍາຕົວ/ໜັງສືເດີນທາງເລກທີ............................................ທີ່ຢູ່:ຖະໜົນ:................................
ບ້ານ:...........ໜ່ວຍ.................... ເຮືອນເລກທີ່:.................................ເມືອງ:...................................
ແຂວງ................................ລະຫັດໄປສະນີ...................................ເບີໂທລະສັບ............................
1.2 ເປັນນິຕິບຸກຄົນຊື່............................................................................... ປະເພດ....................ວັນທີ/ເດືອນ/ປີສ້າງຕັ້ງ......../......../............ ເລກທະບຽນວິສາຫະກິດ.................... ສໍານັກງານຕັ້ງຢູ່ຖະໜົນ .........................ບ້ານ.............................ໜ່ວຍ.............ເມືອງ...................................................
ແຂວງ...................................ເຮືອນເລກທີ່..........ລະຫັດໄປສະນີ....................ໂທລະສັບ...................
ໂດຍ...............................................ຜູ້ມີອໍານາດເຊັນແທນນິຕິບຸກຄົນຜູ້ຂໍອະນຸຍາດອາຍຸ..........ປີ, ສັນຊາດ .............................ບັດປະຈໍາຕົວ/ໜັງສືເດີນທາ(ລະບຸ)...............................ເລກທີ່......................
..........................., ອອກໃຫ້ທີ່....................... ແຂວງ..................................ເມືອງ...................
ຖະໜົນ........................ບ້ານ................................ໜ່ວຍ.............ເຮືອນເລກທີ.............................
ລະຫັດໄປສະນີ............................ໂທລະສັບຫ້ອງການ..................................ມືຖື............................

ໄດ້ຮັບ ☐ ໃບອະນຸຍາດການຜະລິດອາຫານສັດ ☐ ໃບອະນຸຍາດນໍາເຂົ້າອາຫານສັດ ☐ ໃບອະນຸຍາດຈໍາໜ່າຍອາຫານສັດຕາມໃບອະນຸຍາດເລກທີ...................., ອອກໃຫ້ວັນທີ..........., ເດືອນ..............., ປີ..................

ໂດຍມີທ່ານ............................................ເປັນຜູ້ດໍາເນີນກິດຈະການ, ອາຍຸ........................ປີ, ສັນຊາດ................................ເຮືອນເລກທີ່...........ໜ່ວຍ......................ຖະໜົນ...............................
ເມືອງ...............................ແຂວງ.........................ລະຫັດໄປສະນີ.................................................
ໂທລະສັບຫ້ອງການ.......................................................ມືຖື..................................................

ແລະ ມີ ☐ ສະຖານທີ່ຜະລິດອາຫານສັດ ☐ ສະຖານທີ່ນໍາເຂົ້າອາຫານສັດ

ຊື່.......................................ເຮືອນເລກທີ່.........ໜ່ວຍ....................ຖະໜົນ......................
ເມືອງ.................................ແຂວງ.....................................ລະຫັດໄປສະນີ...................................
ຫ້ອງການ.................................................ມືຖື...........................................................................

**2. ມີຈຸດປະສົງຈະຂໍໃບຂຶ້ນທະບຽນອາຫານສັດ**

ຊະນິດ...................................................ລັກສະນະ..........................................  ຊຶ່ງມີຊື່ທາງການຄ້າພາສາລາວວ່າ...............................................ພາສາອັງກິດວ່າ............................................

ຊື່ ແລະ ສະຖານຜູ້ຜະລິດ:..........................................................................................................
.......................................................................................................................................

ໃຊ້ສຳລັບ:.............................................................................................................................

ສ່ວນປະສົມປະກອບມີ:........................................................................................................
.......................................................................................................................................
.......................................................................................................................................

- **ມີຄຸນນະພາບ Feed quality ດັ່ງນີ້:**

1) ພະລັງງານແລກປ່ຽນ (ME) ມີຄ່າໃນລະຫ່ວາງ........................................................ Kcal/kg
2) ອັດຕາການຍ່ອຍໄດ້ຂອງທາດອາຫານ (TDN) ມີຄ່າໃນລະຫ່ວາງ......................................... %
3) ໂປຣຕີນ(CP) %  ມີຄ່າໃນລະຫ່ວາງ....................................................................... %
4) ໄຂມັນ(EE) %  ມີຄ່າໃນລະຫ່ວາງ....................................................................... %
5) ເຖົ່າລວມ (TA) %  ມີຄ່າໃນລະຫ່ວາງ....................................................................... %
6) ເຍື່ອໃຍ(CF) %  ມີຄ່າໃນລະຫ່ວາງ....................................................................... %
7) ເຍື້ອໃຍ NDF (%)  ມີຄ່າໃນລະຫ່ວາງ....................................................................... %
8) ເຍື້ອໃຍ ADF (%)  ມີຄ່າໃນລະຫ່ວາງ....................................................................... %
9) ຄວາມຊຸ່ມ(MS) %  ມີຄ່າໃນລະຫ່ວາງ....................................................................... %
10) ແຄລຊຽມ (Ca) %  ມີຄ່າໃນລະຫ່ວາງ....................................................................... %
11) ຟົດສ໌ຟໍຣັສ (P) %  ມີຄ່າໃນລະຫ່ວາງ....................................................................... %
12) ເກືອກິນ, NaCl (%)  ມີຄ່າໃນລະຫ່ວາງ....................................................................... %

- **ມີຄວາມປອດໄພ Feed safety ດັ່ງນີ້:**

**ເຊື້ອຣາ** ມີ Aflatoxins B1, B2, G1,G2. ບໍ່ເກີນ ......................................................ppb/ppm
ມີ Deoxynivalenol B1, B2, G1,G2 ບໍ່ເກີນ..................................................ppb/ppm
ມີ Ochratoxin B1, B2, G1,G2 ບໍ່ເກີນ ......................................................ppb/ppm
ມີ Fumonisins B1, B2, G1,G2 ບໍ່ເກີນ ....................................................ppb/ppm

**ໂລຫະໜັກ** ມີສານຕະກົ່ວ(Pb) . ບໍ່ເກີນ ...................................................................ppb/ppm
ໂຄຣມຽມ (Cr)  ບໍ່ເກີນ ................................................................... ppb/ppm

ແຄດມຽມ (Cd) ບໍ່ເກີນ .................................................................. ppb/ppm

ບາຫຼອດ (Hg) ບໍ່ເກີນ .................................................................. ppb/ppm

ທີນ Tin ບໍ່ເກີນ .................................................................. ppb/ppm

ເຫຼັກ Fe ບໍ່ເກີນ .................................................................. ppb/ppm

ສານໜູ (As) ບໍ່ເກີນ .................................................................. g/kg

**ຕ້ອງບໍ່ມີຢາຕ້ານເຊື້ອໃນອາຫານສັດຈຳພວກ:** ຄູ່ແຣມເຟນີຄອລ, ຄາບາດ໊ອກຊ, ກຸ່ມຢາໄນໂຕຣຟູແຣນ, ອີທ້ອກຊີຄວິນ, ກຸ່ມຢາໂພລີມີກຊີນ, ກຸ່ມຢາເພນີຊີລີນ, ກຸ່ມຢາຟູໂຣຄວິໂນໂລນ ແລະ ຟອດສໂຟໄມຊີນ.

- ຮູບແບບບັນຈຸ

ຊະນິດພາຊະນະບັນຈຸ | ນ້ຳໜັກສຸດທິ / ບໍລິມາດສຸດທິ

.................................................. ..........................................................................

.................................................. ..........................................................................

.................................................. ..........................................................................

ວິທີການປະສົມ(ສະເພາະອາຫານເຂັ້ມຂຸ້ນ)

..........................................................................................................................................

..........................................................................................................................................

..........................................................................................................................................

**3. ຂ້າພະເຈົ້າໄດ້ຄັດຕິດຫຼັກຖານຕ່າງໆ ມາພ້ອມກັບຄຳຮ້ອງນີ້ແລ້ວ ຄື:**

1) ສຳເນົາ ຫຼື ຮູບຖ່າຍໃບອະນຸຍາດການຜະລິດ/ນຳເຂົ້າ ຫຼື ຈຳໜ່າຍອາຫານສັດ ແລ້ວແຕ່ກໍລະນີ
2) ຕົວຢ່າງ ຫຼື ຮູບທີ່ຄືກັບຂອງພາຊະນະບັນຈຸ ຫຼື ຫໍ່ຫຸ້ມອາຫານສຳເລັດຮູບ ຫຼື ອາຫານເຂັ້ມຂຸ້ນ ພ້ອມດ້ວຍສະຫຼາກ ແລະ ຂໍ້ຄວາມໃນສະຫຼາກ
3) ຕົວຢ່າງອາຫານສຳເລັດຮູບ ຫຼື ອາຫານເຂັ້ມຂຸ້ນ ຈຳນວນ 500 ກຣາມ
4) ໃບຢັ້ງຢືນຜົນວິໄຈ ພ້ອມທັງວິທີການວິໄຈ
5) ໃບແຈ້ງຊະນິດ ແລະ ປະລິມານວັດຖຸດິບທີ່ເພີ່ມໃສ່ໃນສູດອາຫານສັດ
6) ໃບຮັບຮອງການອະນຸຍາດໃຫ້ຂາຍຈາກປະເທດຜູ້ຜະລິດ (Certificate of Free Sale) ໃນກໍລະນີນຳເຂົ້າ
7) ບົດລາຍງານຜົນການທົດລອງການນຳໃຊ້ອາຫານສັດສຳເລັດຮູບ ຫຼື ອາຫານເຂັ້ມຂຸ້ນ
8) ເອກະສານອື່ນໆທີ່ກ່ຽວຂ້ອງ (ຖ້າມີ)
9) ນອກຈາກນີ້ຍັງມີຂໍ້ມູນຂອງສ່ວນປະກອບຂອງອາຫານສັດຕາມເອກະສານຊ້ອນທ້າຍທີ່ໄດ້ຄັດຕິດໃນຄຳຮ້ອງສະບັບນີ້.

**ລາຍເຊັນຜູ້ຍື່ນຄຳຮ້ອງ**..................................

(ຊື່..................................)

ເອກະສານຊ້ອນທ້າຍ 2.

ແບບຟອມທີ 2

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຊື່ບໍລິສັດ: ..............................

ເລກທີ............./...........

ທີ່.................. ວັນທີ....../......./.........

ທີ່ຢູ່:.....................................

ເບີໂທລະສັບ:...........................

ອີແມລ:..............................

# ໃບຄຳຮ້ອງຂໍອະນຸຍາດອອກແບບເປົາບັນຈຸອາຫານສັດ

## 1. ຂໍ້ມູນສ່ວນຕົວ

1.1 ຊື່ ແລະ ນາມສະກຸນ.................................................. ອາຍຸ...........ປີ, ສັນຊາດ......................
ບັດປະຈຳຕົວ/ໜັງສືເດີນທາງ ເລກທີ..................................................ທີ່ຢູ່:........................................
ຖະໜົນ:.............................ບ້ານ:...........ໜ່ວຍ................... ເຮືອນເລກທີ່:.................................
ເມືອງ:..................................ແຂວງ................................ລະຫັດໄປສະນີ.......................................
ເບີໂທລະສັບ.................................
1.2 ເປັນນິຕິບຸກຄົນ ຊື່........................................................ປະເພດ...............ວັນທີ/ເດືອນ/ປີສ້າງຕັ້ງ
......../......../............. ເລກທະບຽນວິສາຫະກິດ..............................ສຳນັກງານຕັ້ງຢູ່ຖະໜົນ.........................ບ້ານ
.............................ໜ່ວຍ....................ເມືອງ....................... ແຂວງ...................................
ເຮືອນເລກທີ່.................... ລະຫັດໄປສະນີ .................... ໂທລະສັບ......................ໂດຍ......................
ຜູ້ມີອຳນາດເຊັນແທນນິຕິບຸກຄົນຜູ້ຂໍອະນຸຍາດອາຍຸ..........ປີ,ສັນຊາດ........................ບັດປະຈຳຕົວ/ໜັງສືເດີນທາງ
(ລະບຸ)..................................ເລກທີ່...................,ອອກໃຫ້ທີ່.....................ແຂວງ........................
ເມືອງ.................................. ຖະໜົນ............................................ ບ້ານ..............................
ໜ່ວຍ.......... ເຮືອນເລກທີ.................ລະຫັດໄປສະນີ............................ໂທລະສັບຫ້ອງການ.................
ມືຖື...............................

ໄດ້ຮັບ ☐ ໃບອະນຸຍາດການຜະລິດອາຫານສັດ ☐ ໃບອະນຸຍາດນຳເຂົ້າອາຫານສັດ ☐ ໃບອະນຸຍາດຈຳໜ່າຍອາຫານສັດ

ຕາມໃບອະນຸຍາດເລກທີ.............................., ອອກໃຫ້ວັນທີ..........., ເດືອນ ..............., ປີ...........

ໂດຍມີທ່ານ.............................................ເປັນຜູ້ດຳເນີນກິດຈະການ, ອາຍຸ.......................ປີ, ສັນຊາດ................................ເຮືອນເລກທີ່..........ໜ່ວຍ......................ຖະໜົນ................................ ເມືອງ...............................ແຂວງ.........................ລະຫັດໄປສະນີ.................................................. ໂທລະສັບຫ້ອງການ..........................................ມືຖື...............................................................

ແລະ ມີ □ ສະຖານທີ່ຜະລິດອາຫານສັດ □ ສະຖານທີ່ນຳເຂົ້າອາຫານສັດ

ຊື່.......................................ເຮືອນເລກທີ່.........ໜ່ວຍ...................ຖະໜົນ...................... ເມືອງ.................................ແຂວງ......................................ລະຫັດໄປສະນີ................................ ຫ້ອງການ...............................................ມືຖື.................................................................

**2. ມີຈຸດປະສົງຂຶ້ນທະບຽນ ແບບເປົ້າບັນຈຸອາຫານສັດ**

ຊະນິດ...................................................ລັກສະນະ.......................................... ຊຶ່ງມີຊື່ທາງການຄ້າ ພາສາລາວວ່າ.................................................. ພາສາອັງກິດວ່າ.............................................

ຊື່ ແລະ ສະຖານຜູ້ຜະລິດ:..........................................................................................................
.........................................................................................................................................

ໃຊ້ສຳລັບ:................................................................................................................

ສ່ວນປະສົມປະກອບມີ:................................................................................................
.........................................................................................................................................
.........................................................................................................................................
.........................................................................................................................................
.........................................................................................................................................

- **ມີຄຸນນະພາບ Feed quality ດັ່ງນີ້:**

1) ພະລັງງານແລກປ່ຽນ (ME) ມີຄ່າໃນລະຫວ່າງ......................................................... Kcal/kg
2) ອັດຕາການຍ່ອຍໄດ້ຂອງທາດອາຫານ (TDN) ມີຄ່າໃນລະຫວ່າງ....................................... %
3) ໂປຣຕີນ(CP) % ມີຄ່າໃນລະຫວ່າງ..................................................................... %
4) ໄຂມັນ(EE) % ມີຄ່າໃນລະຫວ່າງ..................................................................... %
5) ເຖົ່າລວມ (TA) % ມີຄ່າໃນລະຫວ່າງ..................................................................... %
6) ເຍື່ອໃຍ(CF) % ມີຄ່າໃນລະຫວ່າງ..................................................................... %

(7). ເຍື້ອໃຍ NDF (%) ມີຄ່າໃນລະຫວ່າງ.................................................................. %

(8). ເຍື້ອໃຍ ADF (%) ມີຄ່າໃນລະຫວ່າງ.................................................................. %

(9). ຄວາມຊຸ່ມ(MS) % ມີຄ່າໃນລະຫວ່າງ.................................................................. %

(10). ແຄລຊຽມ (Ca) % ມີຄ່າໃນລະຫວ່າງ.................................................................. %

(11). ຟົດສ໌ຟໍຣັສ (P) % ມີຄ່າໃນລະຫວ່າງ..................................................................%

(12). ເກືອກິນ, NaCl (%) ມີຄ່າໃນລະຫວ່າງ.................................................................. %

ຊະນິດພາຊະນະບັນຈຸ                                   ນ້ຳໜັກສຸດທິ / ບໍລິມາດສຸດທິ

............................................... ......................................................................

............................................... ......................................................................

............................................... ......................................................................

ວິທີການປະສົມ(ສະເພາະອາຫານເຂັ້ມຂຸ້ນ)

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

..........................................................................................................................

3. ຂ້າພະເຈົ້າໄດ້ຄັດຕິດຫຼັກຖານຕ່າງໆ ມາພ້ອມກັບຄຳຮ້ອງນີ້ແລ້ວ ຄື:

1) ສຳເນົາ ຫຼື ຮູບຖ່າຍໃບອະນຸຍາດການຜະລິດ/ນຳເຂົ້າ ຫຼື ຈຳໜ່າຍອາຫານສັດ ແລ້ວແຕ່ກໍລະນີ

2) ຕົວຢ່າງ ຫຼື ຮູບທີ່ຄືກັນຂອງພາຊະນະບັນຈຸ ຫຼື ຫໍ່ຫຸ້ມອາຫານສຳເລັດຮູບ ຫຼື ອາຫານເຂັ້ມຂຸ້ນ ພ້ອມດ້ວຍສະຫຼາກ ແລະ ຂໍ້ຄວາມໃນສະຫຼາກ

3) ຕົວຢ່າງອາຫານສຳເລັດຮູບ ຫຼື ອາຫານເຂັ້ມຂຸ້ນ ຈຳນວນ 500 ກຣາມ

4) ໃບຢັ້ງຢືນຜົນວິໄຈ ພ້ອມທັງວິທີການວິໄຈ

5) ໃບແຈ້ງຊະນິດ ແລະ ປະລິມານວັດຖຸດິບທີ່ເພີ່ມໃສ່ໃນສູດອາຫານສັດ

6) ໃບຮັບຮອງການອະນຸຍາດໃຫ້ຂາຍຈາກປະເທດຜູ້ຜະລິດ (Certificate of Free Sale) ໃນກໍລະນີນຳເຂົ້າ

7) ບົດລາຍງານຜົນການທົດລອງການນຳໃຊ້ອາຫານສັດສຳເລັດຮູບ ຫຼື ອາຫານເຂັ້ມຂຸ້ນ

8) ເອກະສານອື່ນໆທີ່ກ່ຽວຂ້ອງ (ຖ້າມີ)

9) ນອກຈາກນີ້ຍັງມີຂໍ້ມູນຂອງສ່ວນປະກອບຂອງອາຫານສັດຕາມເອກະສານຊ້ອນທ້າຍທີ່ໄດ້ຄັດຕິດໃນຄຳຮ້ອງສະບັບນີ້.

**ລາຍເຊັນຜູ້ຍື່ນຄຳຮ້ອງ.....................................**

**(ຊື່.....................................)**

# ເອກະສານຊ້ອນທ້າຍ 3.

ແບບຟອມທີ 5

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຊື່ບໍລິສັດ: ..............................

ເລກທີ............./.......

ທີ່................., ວັນທີ......./......./.......

ທີ່ຢູ່:....................................

ເບີໂທລະສັບ:...........................

ອີແມລ:.............................

## ໃບຄຳຮ້ອງຂໍຂຶ້ນທະບຽນວັດຖຸດິບອາຫານສັດ

**1. ຂ້າພະເຈົ້າ**

1.1 ຊື່ ແລະ ນາມສະກຸນ..................................................., ອາຍຸ...........ປີ, ສັນຊາດ...................... ບັດປະຈຳຕົວ/ໜັງສືເດີນທາງ ເລກທີ................................................., ທີ່ຢູ່: ຖະໜົນ:............................ ບ້ານ:...........ໜ່ວຍ............., ເຮືອນເລກທີ່:...........ເມືອງ:..................... ແຂວງ................................. ລະຫັດໄປສະນີ...........................................ເບີໂທລະສັບ...................................................

1.2 ເປັນນິຕິບຸກຄົນ ຊື່.............................................. ປະເພດ.............., ວັນທີ/ເດືອນ/ປີສ້າງຕັ້ງ ......../......../..........., ເລກທະບຽນວິສາຫະກິດ................... ສຳນັກງານຕັ້ງຢູ່ຖະໜົນ........................., ບ້ານ.............................ໜ່ວຍ...................,ເມືອງ...........................,ແຂວງ............................, ເຮືອນເລກທີ່............., ລະຫັດໄປສະນີ ..................., ໂທລະສັບ.....................ໂດຍ.............................. ຜູ້ມີອຳນາດເຊັນແທນນິຕິບຸກຄົນຜູ້ຂໍອະນຸຍາດອາຍຸ..........ປີ,ສັນຊາດ.........................,ບັດປະຈຳຕົວ/ໜັງສືເດີນທາງ(ລະບຸ).................................ເລກທີ່.............................................., ອອກໃຫ້ທີ່..................., ແຂວງ.................................., ເມືອງ................................., ຖະໜົນ....................................... ບ້ານ..............................ໜ່ວຍ................................, ເຮືອນເລກທີ.................................ລະຫັດໄປສະນີ...........................ໂທລະສັບຫ້ອງການ.................................ມືຖື.........................................

ໄດ້ຮັບ ☐ ໃບອະນຸຍາດການຜະລິດອາຫານສັດ ☐ ໃບອະນຸຍາດນຳເຂົ້າອາຫານສັດ ☐ ໃບອະນຸຍາດຈຳໜ່າຍອາຫານສັດຕາມໃບອະນຸຍາດເລກທີ..............................., ອອກໃຫ້ວັນທີ..........., ເດືອນ ............, ປີ.........

ໂດຍມີທ່ານ...........................................ເປັນຜູ້ດຳເນີນກິດຈະການ, ອາຍຸ............................ປີ, ສັນຊາດ.................................ເຮືອນເລກທີ່..........ໜ່ວຍ......................ຖະໜົນ............................... ເມືອງ...............................ແຂວງ.........................ລະຫັດໄປສະນີ.......................................... ໂທລະສັບຫ້ອງການ............................................ມືຖື...........................................................

ແລະ ມີ ☐ ສະຖານທີ່ຜະລິດອາຫານສັດ ☐ ສະຖານທີ່ນຳເຂົ້າອາຫານສັດ

ຊື່.........................................ເຮືອນເລກທີ່..........ໜ່ວຍ....................ຖະໜົນ....................
ເມືອງ................................ແຂວງ.......................................ລະຫັດໄປສະນີ.................................
ຫ້ອງການ...................................................ມືຖື.........................................................................

2. **ມີຈຸດປະສົງຈະຂໍໃບຂຶ້ນທະບຽນອາຫານສັດ** ປະເພດວັດຖຸດິບ ຊະນິດ
........................................................ ລັກສະນະ............................................ຊື່ງມີຊື່ທາງການຄ້າ
ພາສາລາວວ່າ.......................................... ພາສາອັງກິດ......................................... ຊື່ຜູ້ຜະລິດ/
ສະຖານທີ່ຜະລິດຕ່າງປະເທດ........................... ແລະ ມີຄຸນນະພາບ ດັ່ງນີ້:

ໂປຣຕີນ ມີອັດຕາສ່ວນບໍ່ຕໍ່າກວ່າ..........................................................ສ່ວນຮ້ອຍຂອງນໍ້າໜັກ
ໄຂມັນ ມີອັດຕາສ່ວນບໍ່ຕໍ່າກວ່າ..........................................................ສ່ວນຮ້ອຍຂອງນໍ້າໜັກ
ເຍື່ອໃຍ ມີອັດຕາສ່ວນບໍ່ຫຼາຍກວ່າ.......................................................ສ່ວນຮ້ອຍຂອງນໍ້າໜັກ
ຄວາມຊຸ່ມ ມີອັດຕາສ່ວນບໍ່ຫຼາຍກວ່າ.....................................................ສ່ວນຮ້ອຍຂອງນໍ້າໜັກ
ເຖົ່າ ມີອັດຕາສ່ວນບໍ່ຫຼາຍກວ່າ.........................................................ສ່ວນຮ້ອຍຂອງນໍ້າໜັກ
ເກືອ ມີອັດຕາສ່ວນບໍ່ຫຼາຍກວ່າ..........................................................ສ່ວນຮ້ອຍຂອງນໍ້າໜັກ
ແຄວຊຽມ ມີອັດຕາສ່ວນບໍ່ຕໍ່າກວ່າ.......................................................ສ່ວນຮ້ອຍຂອງນໍ້າໜັກ
ຟົດສະຟໍຣັດ ມີມີອັດຕາສ່ວນບໍ່ຕໍ່າກວ່າ................................................ສ່ວນຮ້ອຍຂອງນໍ້າໜັກ
